ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສໍານັກງານໃຫຍ່

ເລກທີ: 3024/ທຄຕລ.2024.
ນະຄອນຫຼວງວຽງຈັນ, ວັນທີ: 02 SEP 2024

# ໜັງສືແຈ້ງເຊີນປະມູນ

**ເຖິງ:** ບັນດາບໍລິສັດຮັບເໝົາກໍ່ສ້າງ, ຕົບແຕ່ງ ແລະ ຜະລິດປ້າຍ ທີ່ນັບຖື.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາຜະລິດເຮືອນແດງຕູ້ ATM ແລະ CRM.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດຮັບເໝົາກໍ່ສ້າງ, ຕົບແຕ່ງ ແລະ ຜະລິດປ້າຍ ກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງ ປະມູນລາຄາວຽກຜະລິດເຮືອນແດງ ATM ຈໍານວນ 28 ຫຼັງ ແລະ CRM ຈໍານວນ 05 ຫຼັງ ຂອງ ທຄຕລ ພາຍຫຼັງຜະລິດສໍາເລັດແລ້ວນໍາສົ່ງຢູ່ ສາງໂພນທັນຂອງ ທຄຕລ ຢູ່ບ້ານໂພນທັນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ໂດຍມີລາຍລະອຽດດັ່ງລຸ່ມນີ້:

## I. ລາຍການ ແລະ ສະເປັກ

### 1. ໂຄງສ້າງພື້ນຖານເຮືອນແດງ

- ຂະໜາດ 265h*140w*260d ທີ່ເຮັດດ້ວຍເຫຼັກໜາ 02ມມ, ເຄືອບສານກັນໜ້ຽງ, ສີສັນຕາມເຕັກນິກ ແລະ ຄວາມຕ້ອງການຂອງ ທຄຕລ (ເຊິ່ງທຸກພາກສ່ວນຂອງໂຄງສ້າງພື້ນຕູ້ ແມ່ນເຊື່ອມຈອດກັນເປັນຊິ້ນສ່ວນດຽວ;
- ປູພື້ນດ້ວຍແຜ່ນວີວ້າບອດໜາ 20ມມ ທັບດ້ວຍແຜ່ນອາລູມີນຽມລາຍຕີນໄກ່ໜາ 02ມມ ຮັບນໍ້າໜັກ 200kg/$m^2$ ຂະໜາດ 120ຊມ*140ມ ພັບລົງລຸ່ມດ້ານໜ້າ;
- ເຮັດຢ່ວງຫິ້ວໃສ່ຫຼັງຄາຕູ້ 02 ອັນ ເພື່ອຍົກເວລາເຄື່ອນຍ້າຍ ແລະ ຕິດຕັ້ງ.

### 2. ສ່ວນຂອງຕູ້

- ເສົາສູງ 200ຊມ ທັງ 04 ດ້ານ ຂະໜາດ 20ຊມ*20ຊມ, ເຮັດດ້ວຍແຜ່ນເຫຼັກໜາ 02ມມ;
- ປະຕູດ້ານໜ້າ ເຮັດດ້ວຍເຫຼັກໜາ 02ມມ ຂະໜາດ 110ຊມ*200ຊມ, ພ້ອມທັງພົ່ນສີຂາວ ແລະເຈາະປ່ອງເຮັດຂອບບົວສີຂາວ ຂະໜາດໜາ 04ຊມ ພ້ອມທັງຕິດແຜ່ນສະຕິກເກີໃສ່ດ້ານໜ້າ ສ່ວນໂຕໜັງສືເທິງປະຕູດ້ານໜ້າ ເຮັດເປັນນູນດ້ວຍແຜ່ນພາສວູດໜາ 02ມມ ຂະໜາດຕາມຄວາມເໝາະ;
- ຝາປິດດ້ານຂ້າງຊ້າຍ ແລະ ຂວາ ເຮັດດ້ວຍເຫຼັກໜາ 02ມມ ຂະໜາດ 110ຊມ*200ຊມ ພ້ອມເຮັດເປັນສະຕິກເກີຕິດໃສ່ແຜ່ນອາຄີລິກໜາ 03ມມ ໃສ່ທັງ 02 ຂ້າງ;
- ຝາກັ້ນດ້ານຂ້າງເຮັດດ້ວຍແຜ່ນອາຄີລິກໃສໜາ 10ມມ ຂະໜາດ 110ຊມ*197ຊມ ຂອບເຮັດດ້ວຍສະແຕນເຫຼດ, ດ້ານລຸ່ມໃຫ້ມີປ່ອງລະບາຍອາກາດ 03ຊມ ແລະ ໃສ່ໄລກອນເທິງ ແລະ ລຸ່ມ ສາມາດປິດ-ເປີດໄດ້;
- ມີກະແຈ ປິດ-ເປີດ ໃສ່ປະຕູໜ້າ ແລະ ຫຼັງ;
- ຕິດສະໜວນກັນຄວາມຮ້ອນ;
- ເຈາະຮູວົງມົນເພື່ອແລ່ນສາຍໄຟເຂົ້າໃນເຮືອນແດງ 01 ຮູ ຂະໜາດເສັ້ນຜ່າກາງ 04ຊມ;
  (ທັງໝົດນີ້ແມ່ນປະກອບກັນເປັນ 01 ຊິ້ນສ່ວນ)
- ຜະລິດປ້າຍຫົວດ້ານໜ້າ ຂະໜາດ 50ຊມ*140ຊມ ເຮັດດ້ວຍແຜ່ນເຫຼັກໜາ 02ມມ ເປັນມູມໂຄ້ງເທິງ ແລະ ລຸ່ມ ເຮັດຮ່ອງກັນນໍ້າຝົນໄຫຼເຂົ້າໃນ ກວ້າງ 1.5ຊມ, ເລິກ 01ຊມ ແຜ່ນປ້າຍພົ່ນສີຂາວ ແລະ



ເລກທີ 01, ຖະໜົນ: ປາງຄໍາ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

ຕິດສະຕິກເກີສີແດງທັບ ສຳລັບໂລໂກ BCEL ແລະ ໂຕໜັງສື ATM 24/7 ເຮັດເປັນນູນດ້ວຍແຜ່ນ ອາຄີລິກໜາ 03ມມ ຂອບຊື້ງ ແລ່ນໄຟໃສ່ທາງໃນ;

- ຜະລິດປ້າຍຫົວດ້ານຂ້າງ ຂະໜາດ 50ຊມ*240ຊມ ເຮັດດ້ວຍແຜ່ນເຫຼັກໜາ 02ມມ ແຜ່ນປ້າຍພື້ນສີຂາວ ແລະ ຕິດສະຕິກເກີສີແດງທັບ ສຳລັບໂລໂກ BCEL ແລະ ໂຕໜັງສື ATM 24/7 ເຮັດເປັນນູນດ້ວຍແຜ່ນອາຄີລິກ ແລ່ນໄຟໃສ່ທາງໃນ;

  (ທັງຫມົດນີ້ແມ່ນປະກອບກັນເປັນ 01 ຊິ້ນສ່ວນ)

- ເຮັດຖ້ານຢອງອຸປະກອນໄວ້ໃນເຮືອນຕູ້ ຂະໜາດ 30ຊມ*50ຊມ ຈອດຕິດກັບເຮືອນແດງຕູ້;
- ເຮັດຕັ່ງເກ້ນ້ອຍ 03 ຊັ້ນ ຂະໜາດ 30ຊມ*50ຊມ ແລະ ສູງ 100ຊມ.

3. **ວຽກກລະບົບໄຟ**
   - ລູກ CB Schneider 1P 20A ຈຳນວນ 02 ລູກ;
   - ລູກ CB Schneider 1P 16A ຈຳນວນ 02 ລູກ;
   - ລູກ CB Schneider 2P 63A ຈຳນວນ 01 ລູກ;
   - ຕູ້ໂຫຼດ Schneider 2P 04 ຊ່ອງ ຈຳນວນ 01 ໜ່ວຍ
   - ກ່ອງລອຍ 4*4 ຍີ່ຫໍ້ PANASONIC ຈຳນວນ 01 ກ່ອງ;
   - ບອກແຈກ 4*4 ຈຳນວນ 01 ໂຕ;
   - ສາຍ VCT 2*1.5 ຍີ່ຫໍ້ BANKKOK ຈຳນວນ 30M;
   - ສາຍ VCT 2*4.0 ຍີ່ຫໍ້ BANKKOK ຈຳນວນ 6M;
   - ສະວິກແສງ ຈຳນວນ 01 ໂຕ;
   - ໜ້າກາກ 6T ຍີ່ຫໍ້ PANASONIC ຈຳນວນ 01 ໂຕ;
   - ປັກກາວຄູ່ PANASONIC ແທ້ ຈຳນວນ 02 ລູກ;
   - ສາຍໄຟ THW 1*4 ສີຂຽວ ຈຳນວນ 6M;
   - ດອກໄຟມົນ LED ຍີ່ຫໍ້ PANASONIC 13W ຈຳນວນ 02 ຊຸດ;
   - TIMER 220V ຈຳນວນ 01 ຊຸດ;
   - ພັດລົມດູດອາກາດ ຂະໜາດ 06 ນີ້ວ 04 ໜ່ວຍ.

## II. ເງື່ອນໄຂການປະກອບເອກະສານການປະມູນ

### 1. ເອກະສານຊອງທີ 1 (ບໍ່ປິດຊອງ)

1) ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດ (ສຳເນົາໃບທະບຽນວິຫາສາຫະກິດ, ໃບຢັ້ງຢືນການເສຍອາກອນ ປີ 2023 ແລະ ໃບອະນຸຍາດດຳເນີນທຸລະກິດ);
2) ເອກະສານກ່ຽວກັບມາດຕະຖານເຕັກນິກແມ່ນໃຫ້ລະບຸຄົບຖ້ວນກ່ຽວກັບວັດສະດຸທີ່ຈະຜະລິດ, ສະຖານທີ່ຜະລິດສິນຄ້າ, ກຳນົດເວລາສົ່ງເຄື່ອງ ແລະ ການຮັບປະກັນສິນຄ້າ;
3) ຄຸນວຸດທິຂອງບໍລິສັດ ແລະ ປະສົບການທີ່ເຮັດວຽກດັ່ງກ່າວ ຫຼື ວຽກທີ່ຄ້າຍຄືລັກສະນະດຽວກັນ;
4) ກຳນົດຍື່ນຊອງມາດຕະຖານເຕັກນິກ ຈະປິດຮັບວັນທີ **20/09/2024** ເວລາ **15:30 ໂມງ** ທີ່ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສຳນັກງານໃຫຍ່ ທີ່ປ່ອງຂາອອກ-ຂາເຂົ້າ ອາຄານ C ຊັ້ນ 4;

2. **ເອກະສານຊອງທີ 2 (ປິດຊອງ)**

1) ໃບສະເໜີລາຄາໃຫ້ລະບຸລາຄາລວມອາກອນມູນຄ່າເພີ່ມ ທັງໝົດເປັນສະກຸນເງິນກີບ ໃຫ້ຄົບຖ້ວນ;
2) ໃນວັນທີ **01/10/2024** ເວລາ **9:00** ໂມງ ແມ່ນມື້ເປີດຊອງປະມູນແຈ້ງໃຫ້ບໍລິສັດ ຮ້ານຕົວແທນຈຳໜ່າຍ ຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມອາຄານ C ຊັ້ນ 5 ຫ້ອງ 5/2;
3) ຜູ້ສະໜອງ ຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໃຫ້ໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງວັນທີ 31/12/2024) ຫຼື ແຊັກທີ່ວີຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ) ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

**III. ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ຊະນະການປະມູນ**

1) ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 02% ຂອງມູນຄ່າລວມທີ່ສະເໜີປະມູນ;
2) ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນຄວາມຮັບຜິດຊອບຂອງຜູ້ສະໜອງ.

**IV. ການຊຳລະ ແບ່ງເປັນ 03 ງວດ**

1) ງວດທີ 01: ຊຳລະ 50% ຂອງມູນຄ່າທັງໝົດ ພາຍຫຼັງປະຕິບັດວຽກສຳເລັດ 50% ໂດຍໄດ້ຮັບການກວດວຽກຈາກຄະນະກຳມະການຕິດຕາມກວດກາ ຫຼື ຄະນະກຳມະການກ່ຽວຂ້ອງ ທຄຕລ;
2) ງວດທີ 02: ຊຳລະ 40% ຂອງມູນຄ່າທັງໝົດ ພາຍຫຼັງປະຕິບັດວຽກ 100% ໂດຍໄດ້ຮັບການກວດວຽກຈາກຄະນະກຳມະການຕິດຕາມກວດກາ ຫຼື ຄະນະກຳມະການກ່ຽວຂ້ອງ ທຄຕລ;
3) ງວດທີ 03: ຊຳລະເງິນຄ້ຳປະກັນຄຸນນະພາບ ທີ່ຫັກໄວ້ 10% ຂອງມູນຄ່າທັງໝົດ ໄລຍະ 01 ປີ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

**ນ. ສາຍສະໝອນ ຈັນທະຈັກ**

**ຜູ້ປະສານງານ:**

1) ທ່ານ ພູວອນ ສໍອິນໄຊ 020 5955 9889
2) ທ່ານ ສັນຍາໄຊ ພົນຍະວົງ 020 2222 4446